# ຄຳນຳ

ໃນປີ 2008, ກອງທຶນປົກປັກຮັກສາສິ່ງແວດລ້ອມ ໄດ້ເພີ້ມທະວີການສະໜອງທຶນຮອນໃຫ້ແກ່ກິດຈະການຕ່າງໆ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງສິ່ງແວດລ້ອມ ໂດຍສະເພາະສິ່ງເສດເຫຼືອ, ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ, ການອະນຸລັກຊີວະນາໆພັນແລະການພັດທະນາຊຸມຊົນຢູ່ ສປປລາວ ຊຶ່ງບັນດາແຂວງ, ຂະແໜງການແລະອົງການຈັດຕັ້ງຕ່າງໆ ໄດ້ສະເໜີມາ.

ມາຮອດທ້າຍປີນີ້, ກອງທຶນປົກປັກຮັກສາສິ່ງແວດລ້ອມ ໄດ້ເປີດ ທັງໝົດ 5 ກອງທຶນຍ່ອຍ ແລະ ໄດ້ສະໜອງທຶນຮອນໃຫ້ແກ່ 148 ໂຄງການແລ້ວ ລວມມູນຄ່າຫຼາຍກວ່າ 1.8 ລ້ານໂດລາ; ໃນນັ້ນ 64 ໂຄງການຍ່ອຍໄດ້ຮັບການຈັດຕັ້ງປະຕິບັດສຳເລັດແລ້ວ. ອັນເຮັດໃຫ້ ແຜນການຂອງ ກປສ ມີຄວາມຄືບໜ້າໄປຢ່າງໜັກແໜ້ນ.

ໃນຜົນຂອງການເຄື່ອນໄຫວດັ່ງກ່າວ, ກອງທຶນປົກປັກຮັກສາສິ່ງແວດລ້ອມ ສະແດງຄວາມຂອບໃຈນຳທຸກການຈັດຕັ້ງ ໃນຄວາມພະຍາຍາມ ຈັດຕັ້ງປະຕິບັດ ພັນທະຂອງຕົນ ໃນການປົກປັກຮັກສາສິ່ງແວດລ້ອມ ແລະ ຂອບໃຈນຳການສະໜັບສະໜູນຢ່າງຕໍ່ເນື່ອງຂອງທະນາຄານໂລກ.

ກອງທຶນປົກປັກຮັກສາສິ່ງແວດລ້ອມ ຍັງຫວັງວ່າໃນຕໍ່ໜ້າວ່າຈະໄດ້ຮັບການຮ່ວມມືແລະສະໜັບສະໜູນເປັນຢ່າງດີ ຈາກທຸກພາກສ່ວນ ເພື່ອບັນລຸໄດ້ຕາມຈຸດປະສົງຂອງກອງທຶນແລະຂອງຍຸດທະສາດສິ່ງແວດລ້ອມແຫ່ງຊາດ ພ້ອມທັງປະກອບສ່ວນເຂົ້າໃນການພັດທະນາສ້າງສາເສດຖະກິດ-ສັງຄົມຂອງ ສປປລາວ.

ຮອງນາຍົກລັດຖະມົນຕີ
ປະທານສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ



ອາຊາງ ລາວລີ

# ສາລະບານ


*ຄຳນຳ* ..... *i*

*1. ພາກສະເໜີ* ..... *1*

*2 ສະຫຼຸບ ການເຄື່ອນໄຫວວຽກງານ* ..... *1*

**2.1. ຈັດຕັ້ງແລະບໍລິຫານ ..... 1**

2.1.1. ສະພາບໍລິຫານ ..... 1

2.1.2. ຄະນະຊີ້ນຳໂຄງການ ..... 1

2.1.3. ພະນັກງານ ..... 1

2.1.4. ລະບຽບການຄຸ້ມຄອງ ກປສ ..... 2

2.1.5. ຫ້ອງການ ..... 2

2.1.6. ກາຫມາຍ ..... 2

**2.2. ການ ຄຸ້ມຄອງການເງິນ ..... 3**

2.2.1. ບັນຊີທະນາຄານ ..... 3

2.2.2. ລະບົບບັນຊີ ..... 3

2.2.3. ການກວດສອບບັນຊີ ..... 3

**2.3. ກອງທຶນຍ່ອຍ ..... 4**

**2.4. ລະບົບແຜນການ ..... 5**

2.4.1. ແຜນສ້າງລາຍຮັບ ..... 5

2.4.2. ຍຸດທະສາດ 5 ປີ ..... 5

2.4.3. ແຜນຝຶກອົບຮົມ ..... 10

**2.5. ການປະຕິບັດແຜນການປີ 2008 ..... 10**

2.5.1. ການອະນຸມັດທຶນໃຫ້ໂຄງການຍ່ອຍສຳລັບປີ 2008 ..... 10

2.5.2. ການຈ່າຍເງິນລ່ວງໜ້າໃຫ້ໂຄງການ ..... 11

**2.6. ການຕິດຕາມແລະການຊີ້ນຳ ..... 12**

2.6.1. ກອງປະຊຸມສະພາບໍລິຫານ ..... 12

2.6.2. ກອງປະຊຸມຄະນະຊີ້ນຳ ຄສລ ..... 13

2.6.3. ການມາເຮັດວຽກ ຂອງທະນາຄານໂລກ ..... 13

**2.7. ຂ່າວສານ ..... 14**

2.7.1. ສູນຂ່າວສານ ..... 14

2.7.2. ການສ້າງເວບໄຊ ..... 15

2.7.3. ກອງປະຊຸມຜູ້ມີສ່ວນຮ່ວມ ..... 16

*3. ລາຍຮັບ-ລາຍຈ່າຍ ..... 17*

**3.1. ລາຍຮັບ ..... 17**

**3.2. ລາຍຈ່າຍ ..... 17**

*4. ສະຫຼຸບ ..... 18*

# 1. ພາກສະເໜີ

ບົດສະຫຼຸບສະບັບນີ້ ໄດ້ຮ່າງຂຶ້ນ ໂດຍອີງໃສ່ **ແຜນການເຄື່ອນໄຫວປະຈຳປີ 2008 ຂອງ ກປສ** ໂດຍເລີ້ມຈາກປີງົບປະມານ ຄືເດືອນ 10/2007 ຫາເດືອນ 9/2008 ຊຶ່ງໄດ້ສັງລວມຫຍໍ້ເປັນຕາຕະລາງ *ໃນເອກກະສານຂັດຕິດ 1.*

# 2. ສະຫຼຸບ ການເຄື່ອນໄຫວວຽກງານ

## 2.1. ຈັດຕັ້ງແລະບໍລິຫານ

### 2.1.1. ສະພາບໍລິຫານ

ສະພາບໍລິຫານ ກປສ ໄດ້ສ້າງຕັ້ງຂຶ້ນຕາມຂໍ້ຕົກລົງເລກທີ 72/ນຍ ລົງວັນທີ 1/11/05 ໂດຍມີສະມາຊິກທັງໝົດ 11 ທ່ານ ແລະ ໄດ້ມີການປັບປຸງໃໝ່ ຕາມຂໍ້ຕົກລົງເລກທີ 42/ນຍ ລົງວັນທີ 22/04/08 ຊຶ່ງມີສະມາຊິກທັງໝົດ 13 ທ່ານ.

ສະພາບໍລິຫານ ກປສ ໄດ້ດຳເນີນການເຄື່ອນໄຫວມາເກືອບເວລາ 3 ປີ ຊຶ່ງໄດ້ຮັບຜົນສຳເລັດເປັນຢ່າງດີ ໃນການຊີ້ນຳນຳພາ ກປສ ໃຫ້ມີຄວາມເຂັ້ມແຂງຂື້ນໄປເລື້ອຍໆ.

### 2.1.2. ຄະນະຊີ້ນຳໂຄງການ

ຄະນະກຳມະການຊີ້ນຳ ໂຄງການສິ່ງແວດລ້ອມແລະສັງຄົມຢູ່ ສປປລາວ (ຄສລ) ໄດ້ຮັບການສ້າງຕັ້ງຂຶ້ນໂດຍປະທານສະພາບໍລິຫານ ກປສ ຕາມຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງແລະການເຄື່ອນໄຫວ ເລກທີ 04/ສນຍ-ກປສ ລົງວັນທີ 13/1/2006 ໃນນັ້ນມີທັງໝົດ 13 ທ່ານ ມາຈາກຂະແໜງການແລະທ້ອງຖິ່ນທີ່ກ່ຽວຂ້ອງ. ຍ້ອນມີຫຼາຍທ່ານ ປ່ຽນແປງໜ້າທີ່, ຄະນະກຳມະການຊີ້ນຳ ຄສລ ຈິ່ງໄດ້ຮັບການປັບປຸງຕາມຂໍ້ຕົກລົງຂອງ ປະທານສະພາບໍລິຫານ ເລກທີ 63/ສນຍ-ກປສ ລົງວັນທີ 4/6/2008.

### 2.1.3. ພະນັກງານ

ພະນັກງານຂອງ ກປສ ໄດ້ເລີ້ມຈາກຈຳນວນ 18 ຄົນໃນປີ 2006 ມາເປັນ 23 ຄົນ ໃນທ້າຍປີ 2008, ຊຶ່ງຫ້ອງການ ກປສ ມີ 7 ຄົນ, ໃນນີ້ ພະນັກງານການເງິນ ຍັງຈະໄດ້ຄວບຕຳແໜ່ງການເງິນຂອງ ຄສລ ແລະ ຄສລ ມີ 16 ຄົນ. ພະນັກງານປະຈຳຫ້ອງການ ມີຄວາມໝັ້ນຄົງ ສ່ວນພະນັກງານມີການປະກອບເຂົ້າແລະລາອອກຫຼາຍ.

ໃນປີ 2008, ຄສລ ໄດ້ມີການປ່ຽນແປງດັ່ງນີ້:

1. ພະນັກງານການເງິນ ໄດ້ລາອອກ 2 ເທື່ອຄົນ, ເພື່ອປະຢັດແລະຄວາມສອດຄ່ອງ ຈິ່ງຈະຈັດເອົາພະນັກງານການເງິນຂອງຫ້ອງການ ລົງໄປຄວບຕຳແໜ່ງ;
2. ເລຂາ ຄສລ ແລະພະນັກງານຈັດຈ້າງຈັດຊື້ ໄດ້ລາອອກ 3ເທື່ອຄົນ ແລະ ກໍໄດ້ຄັດເລືອກເອົາຜູ້ໃໝ່ເຂົ້າແທນ.

3. ທີ່ປຶກສາຕ່າງປະເທດ ຄສລ ກໍໄດ້ລາອອກ ໃນກາງເດືອນ 1/2008, ຫ້ອງການ ກປສ ໄດ້ປຶກສາຫາລືກັບທະນາຄານໂລກ ກ່ຽວກັບຕຳແໜ່ງດັ່ງກ່າວ ແລະ ເພື່ອສະໜອງກັບຄວາມຕ້ອງການຈຶ່ງປ່ຽນເປັນ 2 ຕຳແໜ່ງໃໝ່ ຄື: ຄຸ້ມຄອງໂຄງການ ແລະ ຄຸ້ມຄອງປ່າສະຫງວນ ຊຶ່ງໄດ້ຄັດເລືອກເອົາໃໝ່ໃນທ້າຍປີ 2008.
4. ພະນັກງານຊ່ວຍວຽກການເງິນປະຈຳແຂວງເປົ້າໝາຍ 3ຄົນ ໄດ້ຮັບການຄັດເລືອກເຂົ້າມາໃໝ່ ເພື່ອຊ່ວຍວຽກຢູ່ແຂວງ. ສາມຕຳແໜ່ງດັ່ງກ່າວ ໄດ້ສ້າງຂຶ້ນມາໃໝ່ໃນປີ 2008, ຕາມຄຳເຫັນຂອງທະນາຄານໂລກທີ່ໄດ້ມາຕິດຕາມ ຄສລ ໄລຍະກາງ.

ໃນປີ 2008, ພະນັກງານຂອງ ຄສລ ທີ່ເປັນຄົນລາວ ໄດ້ລາອອກເຖິງ 5 ເທື່ອຄົນ ໃນ 3 ຕຳແໜ່ງຕົ້ນຕໍຄື: ການເງິນ, ຈັດຈ້າງຈັດຊື້ ແລະ ເລຂາ. ເຫດຜົນສຳຄັນ ກໍມີ: ໄປຮຽນຕໍ່, ໄປເຮັດບ່ອນອື່ນທີ່ນະໂຍບາຍສູງກວ່າ ແລະ ໄປເຮັດທຸລະກິດສ່ວນຕົວ.

### 2.1.4. ລະບຽບການຄຸ້ມຄອງ ກປສ

ຫ້ອງການ ກປສ ໄດ້ເລີ້ມປັບປຸງຄູ່ມືດຳເນີນງານ ໂດຍເລີ້ມຈາກ ຄສລ ຊຶ່ງໃນປັດຈຸບັນ ທະນາຄານໂລກ ກຳລັງພິຈາລະນາ ແລະ ພ້ອມດຽວກັນນີ້ ການກວດສອບບັນຊີ ກໍສຳເລັດໃນທ້າຍປີ. ຫ້ອງການ ກປສ ຈະໄດ້ສືບຕໍ່ປັບປຸງ ແລະ ຄາດວ່າສະບັບດັດແກ້ ຈະສຳເລັດໃນປີ 2009.

### 2.1.5. ຫ້ອງການ

ຫ້ອງການ ກປສ ໄດ້ຂໍນຳໃຊ້ສະຖານທີ່ໃນຕຶກ ຈາກອົງການວິທະຍາສາດເຕັກໂນໂລຊີແຫ່ງຊາດ ແລະ ໄດ້ວາງແຜນຂະຫຍາຍເນື້ອທີ່ຂອງຫ້ອງການເຮັດວຽກ ໃຫ້ພຽງພໍກັບຄວາມຕ້ອງການໃນປັດຈຸບັນ. ແຕ່ການປັບປຸງຕົວຈິງ ຍັງບໍ່ທັນແລ້ວ ເພາະການຈັດຈ້າງໄດ້ແກ່ຍາວ ແລະ ຄາດວ່າຈະສຳເລັດໃນຕົ້ນປີ 2009.

### 2.1.6. ກາໝາຍ

ກາໝາຍ ກປສ ໄດ້ຖືກຮັບຮອງໃນກອງປະຊຸມຄັ້ງທີ 4, ເດືອນ 9/2007. ລາຍລະອຽດຂອງກາໝາຍ ແມ່ນມີໃນຮູບ 1. ຈາກນັ້ນ, ຫ້ອງການ ກປສ ໄດ້ນຳໃຊ້ ກາໝາຍດັ່ງກ່າວຕາມຄວາມເໝາະສົມ.

**ຮູບ 1- ກາໝາຍຂອງ ກປສ**

ກອງທຶນປົກປັກຮັກສາສິ່ງແວດລ້ອມ
Environment Protection Fund

## 2.2 ການຄຸ້ມຄອງການເງິນ

### 2.2.1 ບັນຊີທະນາຄານ

ກປສ ຈະໄດ້ຄຸ້ມຄອງບັນຊີທະນາຄານ ໄດ້ເປີດຢູ່ທະນາຄານພາຍໃນທັງໝົດ ໂດຍສົມທົບກັບກະຊວງການເງິນ ຊຶ່ງມີ 3 ລະດັບຄື:

- ບັນຊີຕົ້ນທຶນ ທີ່ທະນາຄານການຄ້າຕ່າງປະເທດ, ຄຸ້ມຄອງໂດຍກະຊວງການເງິນ;
- ບັນຊີລາຍວັນ ແລະ ບັນຊີເງິນຝາກລາຍງວດ ລວມທັງຢູ່ນະຄອນຫຼວງວຽງຈັນ ແລະ ທ້ອງຖິ່ນ ຄຸ້ມຄອງໂດຍ ຫ້ອງການ ແລະ ຄສລ;
- ບັນຊີໂຄງການຍ່ອຍ ທີ່ໄດ້ຮັບທຶນຈາກ ກປສ, ໂດຍເຈົ້າຂອງໂຄງການຍ່ອຍ.

### 2.2.2 ລະບົບບັນຊີ

ລະບົບຄຸ້ມຄອງການເງິນໂດຍໂປຼແກຼມຄອມພິວເຕີ ໄດ້ຕິດຕັ້ງໃນກາງເດືອນ 11/2007 ເພື່ອຮັບໃຊ້ ກອງທຶນຍ່ອຍທັງໝົດ. ໃນໄລຍະຜ່ານມາ ກປສ ກໍໄດ້ມີການທົດລອງນຳໃຊ້ລະບົບດັ່ງກ່າວ ແລະເຫັນວ່າຍາກທີ່ຈະຮັບໃຊ້ກອງທຶນຍ່ອຍໄດ້ໝົດ ແລະໄດ້ມາຈັດສຳລັບ ຄສລ ສາກ່ອນ. ໃນປີ 2009 ຈະໄດ້ປັບເພື່ອໃຫ້ຮັບໃຊ້ ກປສ ໃຫ້ແລ້ວ.

### 2.2.3 ການກວດສອບບັນຊີ

ກປສ ໄດ້ຈັດຈ້າງໃຫ້ອົງການກວດສອບບັນຊີແຫ່ງລັດ ດຳເນີນການກວດສອບບັນຊີ ຂອງຫ້ອງການ ແລະ ສຳເລັດໃນເດືອນ 6/08. ກປສ ໄດ້ຈັດຈ້າງເອົາບໍລິສັດກວດສອບບັນຊີເອກກະຊົນຄື ບໍລິສັດໄປວາເຕີເຮົາ (Price Waterhouse Coopers) ມາກວດສອບ ຄສລ ໃນເດືອນ 5/08 ແລະໄດ້ພົບກວດໃນທ້າຍເດືອນ 9/2008.

ອົງການກວດສອບບັນຊີແຫ່ງລັດ ໄດ້ສະຫຼຸບການເຄື່ອນໄຫວບັນຊີຂອງຫ້ອງການ ກປສ ລຸ່ມນີ້:

*ບັນຊີການເງິນຂອງ ກປສ ບໍ່ໄດ້ປະຕິບັດຕາມຄູ່ມືລະບົບບັນຊີໂຄງການສະບັບເລກທີ 1013/ກງ ລົງວັນທີ 6/6/1998 ກ່ຽວກັບລະບົບບັນຊີ ທີ່ກອງທຶນຕ້ອງຖື. ໂດຍສະເພາະແລ້ວ*

*ບົດລາຍງານການເງິນສຳລັບປີບັນຊີທີ່ພວມສິ້ນສຸດ 30 ກັນຍາ 2007 ບໍ່ໄດ້ສ້າງໃບສະຫຼຸບການປະຕິບັດແຜນງົບປະມານ, ໃບສະຫຼຸບແຫຼ່ງທຶນ, ໃບສະຫຼຸບລາຍຈ່າຍເປັນປະເພດ, ໃບລາຍງານແຫຼ່ງທຶນແລະການນຳໃຊ້ທຶນ, ໃບລາຍງານການເບີກຈ່າຍເງິນກູ້.*

*ຕາມຄຳເຫັນຂອງອົງການກວດສອບແຫ່ງລັດ:*

*ກ. ເອກກະສານການລາຍງານການເງິນທີ່ກ່າວມາຂ້າງເທິງນັ້ນ ໄດ້ສະແດງຢ່າງຖືກຕ້ອງກັບຕົວຈິງ ກ່ຽວກັບຖານະການເງິນແລະລາຍຈ່າຍຂອງກອງທຶນ ທີ່ພວມສິ້ນສຸດໃນວັນທີ 30 ກັນຍາ 2007, ໂດຍສອດຄ່ອງກັບຫຼັກການບັນຊີທີ່ລັດຖະບານແຫ່ງ ສປປລາວ ໄດ້ຮັບຮອງເອົາ;*

*ຂ. ກປສ ໄດ້ນຳໃຊ້ຈາກລາຍຮັບທັງໝົດຈາກການກູ້ຢືມ ເພື່ອຈຸດປະສົງຂອງກອງທຶນເທົ່ານັ້ນ ໂດຍສອດຄ່ອງກັບລະບຽບຂອງກອງທຶນແລະ ບໍ່ມີລາຍຮັບໃດໆ ໄດ້ຖືກນຳໃຊ້ເພື່ອຈຸດປະສົງອື່ນ;*

*ຄ. ຍົກເວັ້ນຂໍ້ລະບົບບັນຊີຂອງ ກປສ ທີ່ໄດ້ໃຊ້ການບັນທຶກຕິດຕາມບໍ່ສອດຄ່ອງກັບປື້ມຄູ່ມືລະບົບບັນຊີໂຄງການ ສະບັບເລກທີ 1013/ກງ ລົງວັນທີ 6/6/1998 ຄືທີ່ໄດ້ກຳນົດໄວ້ໃນຂ້າງເທິງນັ້ນ.*

ສ່ວນ ບໍລິສັດໄປູວາເຕີເຮົາຄຸບເປີ ທີ່ໄດ້ກວດສອບບັນຊີຂອງ ຄສລ ກໍໄດ້ພົບເຫັນບັນຫາສຳຄັນຈຳນວນໜຶ່ງ ກ່ຽວກັບການເບີກຈ່າຍ ແລະ ການຄວບຄຸມຄວາມສ່ຽງໃນການຈັດຈ້າງ/ຈັດຊື້, ໃນການຄວບຄຸມ ຄອມພິວເຕີ ແລະ ໃນການເບີກເງິນລ່ວງໜ້າ.

## 2.3. ກອງທຶນຍ່ອຍ

ກປສ ໄດ້ສ້າງກອງທຶນຍ່ອຍຂຶ້ນທັງໝົດເປັນ 5 ກອງທຶນຍ່ອຍ, ຄືບຕາມແຜນ 5 ປີ ດັ່ງນີ້:

1. ກອງທຶນຍ່ອຍ ນະໂຍບາຍແລະສ້າງຄວາມສາມາດ
2. ກອງທຶນຍ່ອຍ ລົງທຶນໃສ່ ຊີວະນາໆພັນແລະຊຸມຊົນ
3. ກອງທຶນຍ່ອຍ ຄວບຄຸມມົນລະພິດ
4. ກອງທຶນຍ່ອຍ “ຄຸ້ມຄອງຊັບພະຍາກອນນ້ຳ”
5. ກອງທຶນຍ່ອຍ “ຄຸ້ມຄອງທີ່ດິນແບບຍືນຍົງ”

ທັງໝົດໄດ້ສະແດງອອກໃນຮູບ 2.

***ຮູບ 2- ກອງທຶນຍ່ອຍທີ່ໄດ້ສ້າງຂຶ້ນ ມາຮອດປີ 2008***




## 2.4 ລະບົບແຜນການ

### 2.4.1 ແຜນສ້າງລາຍຮັບ

ການຈັດຕັ້ງປະຕິບັດມະຕິກົນໄກລິງຂອງສະພາບໍລິຫານ ກ່ຽວກັບການຊື້ພັນທະບັດທະນາຄານ ຍັງບໍ່ທັນເຮັດໄດ້ເທື່ອ ເພາະຍັງບໍ່ໄດ້ເປີດຂາຍເທື່ອ. ຄຽງຄູ່ກັນນີ້, ແຕ່ເດືອນ 3/08 ເປັນຕົ້ນມາ, ດອກເບ້ຍເງິນຝາກ ກໍໄດ້ຫຼຸດລົງຫຼາຍ ຈາກເດືອນລະ ປະມານ 20.000ໂດລາ ມາເປັນ ປະມານ 15.000 ໂດລາໃນເດືອນ 3/08 ແລະສືບຕໍ່ຫຼຸດລົງອີກໃນເດືອນ 4 ແລະເດືອນ 5/2008 ແລະໃນເດືອນ 6/2008 ກໍໄດ້ພຽງແຕ່ 6,479 ໂດລາ, ອັນເຮັດໃຫ້ລາຍຮັບຂອງ ກປສ ຫຼຸດລົງຫຼາຍແລະບໍ່ໄດ້ຕາມແຜນການປີ ຄື 240,000 ໂດລາ/ປີ ແລະ ແຕະຕ້ອງແຜນການເຄື່ອນໄຫວຂອງ ກປສ. ດັ່ງນັ້ນ ໃນເດືອນ 8/2008, ສະພາບໍລິຫານ ຈຶ່ງໄດ້ໃຫ້ຢຸດຝາກນຳທະນາຄານແຫ່ງຊາດແລະໃຫ້ມາຝາກລາຍ 2 ປີ ນຳທະນາຄານການຄ້າຕ່າງປະເທດ ຊຶ່ງຈະປັບປຸງລາຍໄດ້ຂອງ ກປສ ມາສູ່ລະດັບເກົ່າ ປະມານເດືອນລະ 20.000 ໂດລາ.

ສຳລັບລາຍຮັບ ທີ່ຄາດວ່າຈະໄດ້ຈາກໂຄງການໄຟຟ້ານ້ຳຕົກ ກໍບໍ່ໄດ້ເທື່ອ. ບັນຫາກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍພັດທະນາໄຟຟ້ານ້ຳຕົກແບບຍືນຍົງ ແມ່ນຍັງຄ້າງ, ອັນນຶ່ງກໍເພາະຂາດດຳລັດຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ ແລະ ຄວາມຫຍຸ້ງຍາກທີ່ຈະບັງຄັບໃຫ້ໂຄງການໄຟຟ້າທີ່ມີຢູ່ໃນປັດຈຸບັນ. ຄາດວ່າບັນຫາດັ່ງກ່າວ ຈະໄດ້ຮັບການແກ້ໄຂ ໃນປີ 2009.

ສຳລັບການປະກອບສ່ວນຂອງບໍລິສັດພູເບ້ຍມາຍນິງ, ຕາມສັນຍາປີ 2007, ຍັງບໍ່ທັນມີຂັ້ນຕອນລະອຽດເພື່ອຕິດຕາມເອົາທຶນດັ່ງກ່າວ ມານຳໃຊ້. ມັນມີຄວາມຈຳເປັນທີ່ອີງການກ່ຽວຂ້ອງຈະວາງຫຼັກການລະອຽດ ສຳລັບບັນຫາດັ່ງກ່າວ.

### 2.4.2 ຍຸດທະສາດ 5 ປີ

ການຈັດຕັ້ງປະຕິບັດແຜນຍຸດທະສາດ 5 ປີ ໄດ້ມີຄວາມຄືບໜ້າໄປເປັນຢ່າງດີ. ກປສ ໄດ້ເປີດກອງທຶນຍ່ອຍໝົດທັງ 5 ຕາມແຜນການ. ເມື່ອມາທຽບກັບແຜນການ 5 ປີແລ້ວ, ມາຮອດທ້າຍປີ 2008, ການອະນຸມັດທຶນຮອນ

ແມ່ນໄດ້ເກືອບ 52%, ປະມານ 1,8 ລ້ານໂດລາ ແລະ ອີກສ່ວນເຫຼືອ ຈະສາມາດປະຕິບັດໄດ້ໃນອີກ 15 ເດືອນຕໍ່ໜ້າ ກໍແຕ່ເມື່ອໂຄງການຍ່ອຍ ເປັນໂຄງການຂະໜາດໃຫຍ່ ແລະ ໄດ້ຮັບການຈັດຕັ້ງເປັນຢ່າງດີຈາກ ໜ່ວຍງານຕ່າງໆ ໂດຍສະເພາະ:

- 3 ກົມຫຼັກ ຄືກົມໄຟຟ້າ, ກະຊວງພະລັງງານແລະບໍ່ແຮ່ (ກພບ) ແລະ ກົມສິ່ງແວດລ້ອມ ແລະກອງເລຂາຄະນະປະສານງານຊັບພະຍາກອນນ້ຳ, ອຂນສ ຄວນໄດ້ເອົາໃຈໃສ່ວາງແຜນແລະຮ່າງໂຄງການລະອຽດມາສະເໜີຂໍທຶນ;
- 3 ແຂວງເປົ້າໝາຍຄວນປັບປຸງແຜນການ ແລະ ສ້າງໂຄງການຍ່ອຍຂະໜາດໃຫຍ່ຈຳນວນ ໜຶ່ງ ຂຶ້ນ ແລະ ເອົາໃຈໃສ່ເພື່ອຈະໄດ້ຈັດຕັ້ງປະຕິບັດໃຫ້ທັນກັບເວລາ.

ການສົມທຽບການອະນຸມັດ ໃສ່ແຜນການ 5 ປີ ແມ່ນມີໃນ*ຕາຕະລາງ 1.*

**ຕາຕະລາງ 1- ການອະນຸມັດໂຄງການຜ່ານມາ ສົມທຽບກັບແຜນ 5 ປີ**

| | ແຜນ 5 ປີ (ໂດລາ) | ອະນຸມັດຜ່ານມາ (ໂດລາ) | ຈຳນວນ ໂຄງການ | % |
|---|---|---|---|---|
| ຊີວະນາໆພັນ | 1,460,000 | 1,082,039 | 90 | 74.11 |
| ນະໂຍບາຍ | 1,600,000 | 636,253 | 39 | 39.77 |
| ຄວບຄຸມມົນລະພິດ | 250,000 | 129,634 | 17 | 51.85 |
| ຄຸ້ມຄອງຊັບພະຍາກອນນ້ຳ | 140,000 | 10,317 | 1 | 7.37 |
| ຄຸ້ມຄອງທີ່ດິນ | 150,000 | 2,141 | 1 | 1.43 |
| ລວມ | 3,600,000 | 1,860,384 | 148 | 51.68 |

ສຳລັບການອະນຸມັດ ໂຄງການຍ່ອຍຈາກກອງທຶນຍ່ອຍຊີວະນາໆພັນ ຊຶ່ງຈັດຕັ້ງໃນສາມແຂວງເປົ້າໝາຍ ເຫັນວ່າ ໄດ້ເພີ້ມຂຶ້ນໄວ ແລະ ໄດ້ທັງໝົດ 90 ບົດ. *ລາຍລະອຽດ ມີໃນຕາຕະລາງ 2.*

**ຕາຕະລາງ 2- ການກະຈາຍການສະໜອງທຶນຂອງໂຄງການຍ່ອຍຊີວະນາໆພັນ ໃນທ້າຍປີ 2008**

| ແຂວງ | ຈຳນວນ ໂຄງການ | ມູນຄ່າ (ໂດລາ) |
|---|---|---|
| ສະຫວັນນະເຂດ | 23 | 322,140 |
| ຄຳມ່ວນ | 38 | 433,104 |
| ບໍລິຄຳໄຊ | 29 | 326,795 |
| ລວມ | 90 | 1,082,039 |

*ສ່ວນບັນຊີ ໂຄງການຍ່ອຍທີ່ໄດ້ອະນຸມັດມາທັງໝົດ ແມ່ນມີໃນເອກກະສານຂັດຕິດ 2.*

ມາຮອດທ້າຍປີ 2008, ກປສ ໄດ້ສະໜອງທຶນແກ່ໂຄງການຍ່ອຍທັງໝົດ 148. ໂຄງການທີ່ໄດ້ຮັບທຶນນັ້ນ ເປັນໂຄງການຂະໜາດນ້ອຍ 85%, ລາຍລະອຽດ *ແມ່ນມີໃນຕາຕະລາງ 3* ຊຶ່ງມາຈາກບາງເຫດຜົນເຊັ່ນ:

1. ຂັ້ນຕອນການອະນຸມັດ ໜ້ອຍແລະສັ້ນກວ່າໂຄງການຍ່ອຍຂະໜາດໃຫຍ່;
2. ການຂຽນໂຄງການຂະໜາດນ້ອຍ ແມ່ນເຮັດເປັນພາສາລາວກໍ່ໄດ້, ສ່ວນໂຄງການຂະໜາດໃຫຍ່ ຕ້ອງເຮັດເປັນພາສາອັງກິດ;
3. ການຄຸ້ມຄອງໂຄງການຂະໜາດນ້ອຍ ໂດຍລວມແລ້ວແມ່ນ ມີຈຳນວນຫຼາຍແຕ່ງ່າຍດາຍກວ່າໂຄງການຂະໜາດໃຫຍ່ ຊຶ່ງມີຈຳນວນໜ້ອຍ ແຕ່ສະລັບສັບຊ້ອນກວ່າ.

ໂຄງການເຫຼົ່ານີ້ ໄດ້ກະຈາຍໄປເກືອບໃນທົ່ວປະເທດ, ແຕ່ສ່ວນໃຫຍ່ ແມ່ນໃຫ້ 3 ແຂວງເປົ້າໝາຍ ຄື: ສະຫວັນນະເຂດ, ຄຳມ່ວນ ແລະ ບໍລິຄຳໄຊ. ນອກນັ້ນ ກປສ ຍັງສະໜອງທຶນຮອນສ່ວນໃຫຍ່ ໃຫ້ແກ່ 3 ອົງການຫຼັກ (ກົມສິ່ງແວດລ້ອມ, ກົມພະລັງງານ ແລະ ກອງເລຂາຄະນະຊັບພະຍາກອນນ້ຳ) ແລະ ສ່ວນໜຶ່ງໃຫ້ອົງການຈັດຕັ້ງສັງຄົມ, ອົງການມະຫາຊົນ ແລະ ອົງການອື່ນໆ.

**ຕາຕະລາງ 3- ຂະໜາດຂອງໂຄງການຍ່ອຍ ຮອດທ້າຍປີ 2008**

| | ເກີນ 100,000 $ | 50,001-100,000 $ | 10,001-50,000$ | ບໍ່ເກີນ 10,000$ | ລວມ |
|---|---|---|---|---|---|
| ຊີວະນາໆພັນ | 1 | 2 | 10 | 77 | 90 |
| ນະໂຍບາຍ | 2 | 1 | 6 | 30 | 39 |
| ຄວບຄຸມມົນລະພິດ | | | | 17 | 17 |
| ຄຸ້ມຄອງຊັບພະຍາກອນນ້ຳ | | | | 1 | 1 |
| ຄຸ້ມຄອງທີ່ດິນ | | | | 1 | 1 |
| ລວມ | 3 | 3 | 16 | 126 | 148 |
| % | 2.03% | 2.03% | 10.81% | 85.14% | 100.00% |

ມາຮອດທ້າຍປີ 2008, ກປສ ໄດ້ສະໜອງທຶນໃຫ້ໂຄງການຍ່ອຍທັງໝົດ 860,845 ໂດລາ ຊຶ່ງໄດ້ພຽງແຕ່ 23.91% ແລະ ເມື່ອທຽບໃສ່ແຜນການ 5 ປີ, ຍັງເຫຼືອປະມານ 21 ເດືອນເທົ່ານັ້ນ (ແຕ່ເດືອນ 10/2008 ຫາ ເດືອນ 6/2010). ດັ່ງນັ້ນ ອົງການຈັດຕັ້ງປະຕິບັດ ຈະໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດໂຄງການຍ່ອຍທັງໝົດ ໂດຍສະເພາະ ໂຄງການຍ່ອຍຂະໜາດໃຫຍ່ຂອງ 3 ກົມຫຼັກ ແລະ 3 ແຂວງເປົ້າໝາຍ. ການໂອນເງິນໃຫ້ໂຄງການຍ່ອຍຜ່ານມາ ທຽບໃສ່ກັບແຜນການ 5 ປີ ແມ່ນມີໃນ*ຕາຕະລາງ 4.*

**ຕາຕະລາງ 4- ການໂອນເງິນໃຫ້ໂຄງການຍ່ອຍຜ່ານມາ ສົມທຽບກັບແຜນ 5 ປີ**

| | ແຜນ 5 ປີ (ໂດລາ) | ໂອນເງິນຜ່ານມາ (ໂດລາ) | % |
|---|---|---|---|
| ຊີວະນາໆພັນ | 1,460,000 | 343,892 | 23.55 |
| ນະໂຍບາຍ | 1,600,000 | 416,525 | 26.03 |
| ຄວບຄຸມມົນລະພິດ | 250,000 | 87,969 | 35.19 |
| ຄຸ້ມຄອງຊັບພະຍາກອນນ້ຳ | 140,000 | 19,214 | 13.72 |
| ຄຸ້ມຄອງທີ່ດິນ | 150,000 | 2,141 | 1.43 |
| ລວມ | 3,600,000 | 860,845 | 23.91 |

ມາຮອດທ້າຍປີ 2008, ກປສ ໄດ້ອະນຸມັດທຶນໃຫ້ 148 ໂຄງການຍ່ອຍ. ໃນນີ້, 64 ໂຄງການຍ່ອຍໄດ້ຮັບການຈັດຕັ້ງສຳເລັດແລ້ວ ແລະ ສ່ວນໜຶ່ງກຳລັງເຮັດຫຼືປັບປຸງບົດສະຫຼຸບປິດຢູ່. ມູນຄ່າຂອງໂຄງການທີ່ໄດ້ຮັບການຈັດຕັ້ງສຳເລັດ ແມ່ນຕົກຢູ່ 513,691 ໂດລາ ຫຼື ເກືອບເທົ່າກັບ 1/3 ຂອງທຶນທີ່ໄດ້ອະນຸມັດໃຫ້ໂຄງການຍ່ອຍທັງໝົດ ຊຶ່ງມີທັງໝົດເກືອບ 1,8ລ້ານໂດລາ. *ລາຍລະອຽດ ແມ່ນມີໃນຕາຕະລາງ 5.*

**ຕາຕະລາງ 5- ໂຄງການຍ່ອຍທີ່ຈັດຕັ້ງປະຕິບັດສຳເລັດ ໃນທ້າຍປີ 2008**

| ກອງທຶນຍ່ອຍ | ມູນຄ່າທີ່ອະນຸມັດມາ (ໂດລາ) | ໂຄງການທີ່ສຳເລັດ | | % |
|---|---|---|---|---|
| | | ມູນຄ່າ (ໂດລາ) | ຈຳນວນໂຄງການ | |
| ຊີວະນາໆພັນ | 1,082,039 | 208,264 | 27 | 19% |
| ນະໂຍບາຍ | 636,253 | 222,228 | 25 | 35% |
| ຄວບຄຸມມົນລະພິດ | 129,634 | 70,741 | 10 | 55% |
| ຄຸ້ມຄອງຊັບພະຍາກອນນ້ຳ | 10,317 | 10,317 | 1 | 100% |
| ຄຸ້ມຄອງທີ່ດິນ | 2,141 | 2,141 | 1 | 100% |
| ລວມ | 1,860,384 | 513,691 | 64 | 28% |

ມາຮອດປັດຈຸບັນ, 64 ໂຄງການຍ່ອຍ ໄດ້ຮັບການຈັດຕັ້ງປະຕິບັດສຳເລັດ ໂດຍພື້ນຖານ. ຜົນຂອງການຕີລາຄາໂຄງການດັ່ງກ່າວ ກໍສາມາດສະຫຼຸບໄດ້ໃນເບື້ອງຕົ້ນ ດັ່ງນີ້:

1. ໂຄງການທີ່ປະຕິບັດຕາມແຜນເຕັກນິກ ມີ 59 ໂຄງການ ຫຼື 92%;
2. ໂຄງການທີ່ປະຕິບັດໄດ້ຕາມເວລາ ມີ 45 ໂຄງການ, ຫຼື 70%;
3. ໂຄງການທີ່ປະຕິບັດໄດ້ຕາມຫຼັກການຈັດຊື້ ມີ 51 ໂຄງການ ຫຼື 80%;
4. ໂຄງການທີ່ປະຕິບັດໄດ້ຕາມຫຼັກການການເງິນ ມີ 29 ໂຄງການ ;
5. ໂຄງການປະຕິບັດຕາມປ້ອງກັນສິ່ງແວດລ້ອມ ແລະ ສັງຄົມ ມີ 60 ໂຄງການ ຫຼື 94%.

*ລາຍລະອຽດ ແມ່ນມີໃນຕາຕະລາງ 6.*

**ຕາຕະລາງ 6- ຜົນຂອງການຕີລາຄາໂຄງຍ່ອຍທີ່ຈັດຕັ້ງປະຕິບັດແລ້ວໃນທ້າຍປີ 2008**

| | ຊີວະນາໆພັນ | ນະໂຍບາຍ | ມົນລະພິດ | ນ້ຳ | ທີ່ດິນ | ລວມ | % |
|---|---|---|---|---|---|---|---|
| *ຈັດຕັ້ງແລ້ວ* | *27* | *25* | *10* | *1* | *1* | *64* | |
| ປະຕິບັດຕາມ ແຜນເຕັກນິກ | 27 | 21 | 10 | 1 | 1 | *59* | 92.19 |
| ປະຕິບັດ ຕາມເວລາ | 22 | 15 | 8 | 1 | 1 | *45* | 70.31 |
| ປະຕິບັດຕາມ ຫຼັກການຈັດຊື້/ການເງິນ | 23 | 18 | 9 | 1 | 1 | *51* | 79.69 |
| ປະຕິບັດຕາມ ກອບປ້ອງກັນສິ່ງແວດລ້ອມ ແລະສັງຄົມ | 27 | 21 | 10 | 1 | 1 | *60* | 93.75 |

ມາຮອດທ້າຍປີ 2008, ກປສ ໄດ້ລາຍຮັບທັງໝົດ 1,789,524 ໂດລາ ຫຼື ພຽງແຕ່ 31.36% ຂອງແຜນການ 5 ປີ. ໃນນີ້, ຍ້ອນ ລາຍຮັບດອກເບ້ຍຈາກການເອົາຕົ້ນທຶນໄປຝາກທະນາຄານ ແມ່ນຕ່ຳອີກດ້ານໜຶ່ງ

ຍ້ອນແຜນການລົງທຶນຍັງປະຕິບັດບໍ່ທັນໄດ້ ແລະ ມີພຽງແຕ່ການຝາກເອົາດອກເບ້ຍເທົ່ານັ້ນ. ການສົມທຽບສະພາບລາຍຮັບຜ່ານມາ ໃສ່ກັບແຜນການ 5 ປີ ແມ່ນມີໃນ*ຕາຕະລາງ 7*.

**ຕາຕະລາງ 7 - ສະພາບລາຍຮັບ ຮອດທ້າຍປີ 2008**

| ແຫຼ່ງ | ແຜນ 5 ປີ | ລາຍຮັບ ຜ່ານມາ | % |
|---|---|---|---|
| ດອກເບ້ຍຈາກການເອົາຕົ້ນທຶນໄປຝາກທະນາຄານ | 1,706,747 | 345,590 | 20.25 |
| ຄ່າງມເອົາເງິນຊ່ວຍເຫຼືອລ້າຈາກທະນາຄານໂລກ | 4,000,000 | 1,443,934 | 36.10 |
| ລວມທັງໝົດ | 5,706,747 | 1,789,524 | 31.36 |

### 2.4.3. ແຜນຝຶກອົບຮົມ

ກປສ ໄດ້ຈັດການຝຶກອົບຮົມໃນຫຼາຍຮູບແບບ ໃຫ້ແກ່ພະນັກງານ ຂອງຕົນ (ກປສ):

- ດ້ານການຍົກຍ້າຍຈັດສັນປະຊາຊົນ ໄດ້ມີການໄປທັດສະນະທີ່ ສ.ປ.ຈີນ ໃນໄລຍະ 14 ວັນ, ການເຂົ້າຮ່ວມສຳມະນາ 3 ວັນ ທີ່ຄຳມ່ວນ;
- ການໄປຮ່ວມສຳມະນາ ກ່ຽວກັບການຈ່າຍຄ່າບໍລິການດ້ານສິ່ງແວດລ້ອມ ທີ່ຫວຽດນາມ;
- ການໃຫ້ທຶນຝຶກອົບຮົມ ພາສາອັງກິດ ແກ່ພະນັກງານທີ່ຍັງອ່ອນພາສາດັ່ງກ່າວ;
- ການຍົກລະດັບການຄຸ້ມຄອງການເງິນ/ບັນຊີ ໃຫ້ພະນັກງານການເງິນແລະບັນຊີ ໃຫ້ໂຄງການຍ່ອຍ;
- ຝຶກອົບຮົມດ້ານການເງິນ 3ວັນ;
- ການໄປທັດສະນະກ່ຽວກັບການພັດທະນາຊຸມຊົນຢູ່ໂຄງການເຊໂປນ;
- ມີການສະຫຼຸບຕີລາຄາຖອດຖອນບົດຮຽນຊຶ່ງເປັນການຍົກລະດັບດ້ວຍການຮຽນເຮັດກັບວຽກງານຕົວຈິງ.

ນອກນັ້ນ, ກປສ ຍັງໄດ້ຈັດການຝຶກອົບຮົມ ໃຫ້ອົງການຈັດຕັ້ງປະຕິບັດໂຄງການຍ່ອຍ ພາຍຫຼັງທີ່ໄດ້ເຊັນສັນຍາໃຫ້ທຶນແລ້ວ, ໂດຍສຸມໃສ່ບັນຫາສະເພາະໃນການຄຸ້ມຄອງໂຄງການ, ການເງິນແລະຈັດຈ້າງ-ຈັດຊື້.

## *2.5. ການປະຕິບັດແຜນການປີ 2008*

### 2.5.1. ການອະນຸມັດທຶນໃຫ້ໂຄງການຍ່ອຍສຳລັບປີ 2008

ໃນປີ 2008, ກປສ ອະນຸມັດທຶນໃຫ້ໄດ້ແຕ່ 107 ໂຄງການຍ່ອຍ, ປະມານ 1.3ລ້ານ ໂດລາ ຫຼື 88% ຂອງແຜນການປີ. ແຕ່ຢ່າງໃດກໍດີ, ກປສ ບໍ່ສາມາດສະໜອງທຶນໃຫ້ໄດ້ໝົດ ຍ້ອນວ່າບາງກອງທຶນຍ່ອຍ ບໍ່ມີທຶນຮອນພໍທີ່ຈະສະໜອງໃຫ້ (ເປັນຕົ້ນ ກອງທຶນຍ່ອຍຄວບຄຸມມົນລະພິດ), ໂຄງການຍ່ອຍຈຳນວນໜຶ່ງ ບໍ່ຖືກກັບຈຸດປະສົງແລະເນື້ອໃນຂອງກອງທຶນຍ່ອຍ (ເປັນຕົ້ນ ກອງທຶນຍ່ອຍຊີວະນາໆພັນ).

ລາຍລະອຽດຂອງການອະນຸມັດທຶນໃນປີ 2008 ແມ່ນມີໃນ*ຕາຕະລາງ 8*.

**ຕາຕະລາງ 8- ການອະນຸມັດທຶນຮອນ ແກ່ໂຄງການຍ່ອຍ ໃນປີ 2008**

| | ແຜນການ ປີ 2008 (ໂດລາ) | ໂຄງການທີ່ອະນຸມັດໃນປີ 2008 | ງົບປະມານທີ່ອະນຸມັດໃນປີ 2008 | % ຂອງແຜນການປີ |
|---|---|---|---|---|
| ຊີວະນາໆພັນ | 650,000 | 77 | 980,278 | 150.81 |
| ນະໂຍບາຍ | 552,500 | 15 | 199,212 | 36.06 |
| ຄວບຄຸມມົນລະພິດ | 140,203 | 13 | 102,759 | 73.29 |
| ຄຸ້ມຄອງຊັບພະຍາກອນນ້ຳ | 70,000 | 1 | 10,317 | 14.74 |
| ຄຸ້ມຄອງທີ່ດິນ | 55,000 | 1 | 2,141 | 3.89 |
| ລວມ | 1,467,703 | 107 | 1,294,707 | 88.21 |

## 2.5.2. ການຈ່າຍເງິນລ່ວງໜ້າໃຫ້ໂຄງການ

ເພື່ອຮັບປະກັນການຄຸ້ມຄອງໂຄງການຍ່ອຍທີ່ໄດ້ອະນຸມັດໃຫ້ນັ້ນ, ກປສ ໄດ້ວາງແຜນໂອນເງິນໃຫ້ໂຄງການຍ່ອຍ ເປັນແຕ່ລະງວດ, ຕາມທີ່ເຫັນວ່າຈຳເປັນ ແລະ ໃຫ້ໂຄງການຍ່ອຍທີ່ໄດ້ສະຫຼຸບແລະສະເໜີແຜນໃໝ່ ມາໃຫ້ແລ້ວຈຶ່ງໂອນທຶນໃຫ້ ໃນໄລຍະຕໍ່ໄປ.

ໃນປີ 2008, ກປສ ໄດ້ໂອນໃຫ້ໄດ້ແຕ່ 609,164 ຫຼື 49.2% ຂອງແຜນງົບປະມານປີ, ຊຶ່ງຢັ້ງຢືນວ່າການຈັດຕັ້ງປະຕິບັດໂຄງການຍ່ອຍ ແມ່ນຍັງຊັກຊ້າຫຼາຍ. ເຖິງແມ່ນ ກອງທຶນຍ່ອຍຄວບຄຸມມົນລະພິດ ໄດ້ເກີນຄາດໝາຍກໍດີ, ແຕ່ກອງທຶນຍ່ອຍນະໂຍບາຍແລະຊີວະນາໆພັນ ແມ່ນຫຼຸດແຜນການຫຼາຍ ຍ້ອນໂຄງການຍ່ອຍຂະໜາດໃຫຍ່ ທັງໝົດ ມີການແກ່ຍາວແລະຊັກຊ້າ. ສ່ວນກອງທຶນຍ່ອຍຄຸ້ມຄອງຊັບພະຍາກອນນ້ຳ ແລະ ຄຸ້ມຄອງທີ່ດິນ ຍັງບໍ່ທັນມີບົດສະເໜີຫຼາຍເທື່ອ. ລາຍລະອຽດຂອງການເບີກຈ່າຍລ່ວງໜ້າ ແມ່ນມີໃນ*ຕາຕະລາງ 9.*

**ຕາຕະລາງ 9- ການເບີກຈ່າຍລ່ວງໜ້າໃຫ້ໂຄງການຍ່ອຍ ໃນປີ 2008**

| ກອງທຶນຍ່ອຍ | ແຜນປີ 2008 | ປະຕິບັດ ປີ 2008 | % ທຽບໃສ່ແຜນປີ |
|---|---|---|---|
| ຊີວະນາໆພັນ | 595,524 | 301,807 | 50.68 |
| ນະໂຍບາຍ | 507,469 | 215,827 | 42.53 |
| ຄວບຄຸມມົນລະພິດ | 80,203 | 79,072 | 98.59 |
| ຄຸ້ມຄອງຊັບພະຍາກອນນ້ຳ | 30,000 | 10,317 | 34.39 |
| ຄຸ້ມຄອງທີ່ດິນ | 25,000 | 2,141 | 8.56 |
| ລວມ | 1,238,196 | 609,164 | 49.20 |

## 2.6 ການຕິດຕາມແລະການຊີ້ນຳ

### 2.6.1 ກອງປະຊຸມສະພາບໍລິຫານ

ກອງປະຊຸມສະພາບໍລິຫານຄັ້ງທີ V ໄດ້ຈັດຂຶ້ນຕາມແຜນການປີ ໃນວັນທີ 19/3/2008 ແລະ ຜົນຂອງກອງປະຊຸມອັນສຳຄັນ ສາມາດສະຫຼຸບໄດ້ດັ່ງນີ້:

1. ເຫັນດີຮັບຮອງເອົາບົດສະຫຼຸບຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນການປີ 2008 ແລະ ບົດສະຫຼຸບປີ 2007 ແລະ ໃຫ້ເພີ້ມບົດສະຫຼຸບການກວດສອບປະຈຳປີໃສ່ນຳ.
2. ສຳລັບການອະນຸມັດໂຄງການນັ້ນ ແມ່ນໃຫ້ປະຕິບັດຕາມຂັ້ນຂອງການອະນຸມັດເກົ່າ ແຕ່ປ່ຽນມາເປັນສະກຸນເງິນກີບ ເປັນຕົ້ນ ໃຫ້ຜູ້ອຳນວຍການ ມີສິດອະນຸມັດ ແຕ່ 100.000.000 ກີບ ລົງມາ.
3. ເພື່ອເປັນກອບໃຫ້ແກ່ການອະນຸມັດທຶນຮອນໃຫ້ແກ່ ໂຄງການຍ່ອຍນັ້ນ ສຳລັບງົບປະມານປີ 2008 ໃຫ້ປັບຕາມຕ້ອງການຕົວຈິງຄື:
   - ກອງທຶນຍ່ອຍ ຄວບຄຸມມົນລະພິດ ເປັນ 140,203 ໂດລາ;
   - ກອງທຶນຍ່ອຍ ຄຸ້ມຄອງຊັບພະຍາກອນນ້ຳ ເປັນ 70,000 ໂດລາ;
   - ກອງທຶນຍ່ອຍຄຸ້ມຄອງທີ່ດິນ ເປັນ 55,000 ໂດລາ.

ນອກຈາກນີ້ ປະທານຍັງໄດ້ໃຫ້ຄຳເຫັນຕື່ມ ດັ່ງນີ້:

1. ການຈັດຕັ້ງ ຕ້ອງໄດ້ປັບປຸງໃຫ້ສອດຄ່ອງແລະບໍ່ສັບສົນ;
2. ເພື່ອໃຫ້ມີປະສິດທິຜົນ, ໂຄງການສິ່ງແວດລ້ອມແລະສັງຄົມ ແລະ ກປສ ຄວນສຸມໃສ່ໂຄງການຂະໜາດໃຫຍ່ແລະຂະໜາດກາງ ເປັນຕົ້ນຕໍ, ແຕ່ເອົາໂຄງການຂະໜາດນ້ອຍນຳ ແລະ ເຮັດແບບລັກສະນະໂຄງການສົມທົບ, ພ້ອມນັ້ນຄວນມີຈຸດສຸມ, ເພາະມີພະນັກງານ ແລະ ຄວາມສາມາດຈຳກັດ;
3. ລະບົບການອະນຸມັດ ຍັງມີລັກສະນະສັບສົນ, ຕ້ອງໄດ້ມີການແກ້ໄຂ ບັນຫານີ້ໃຫ້ໄວ ແລະຊັດເຈນຂຶ້ນ; ອັນສຳຄັນ ຕ້ອງມີການຕິດຕາມກວດກາແລະຕີລາຄາຜົນສຳເລັດຂອງໂຄງການ ແລະ ລົງເບິ່ງຕົວຈິງ ເພື່ອເຮັດຕໍ່ຫຼືຂະຫຍາຍຕື່ມ.
4. ການປະສານສົມທົບບໍ່ທັນຄັກແນ່ປານໃດ, ເພື່ອເບິ່ງບູລິມະສິດ, ຢາກເຮັດຕື່ມ/ຕໍ່ ກໍຄວນມີການເຫັນດີນຳກັນຄັກແນ່;
5. ຂະແໜງການຫຼືທ້ອງຖິ່ນ ທີ່ຈັດຕັ້ງປະຕິບັດ ກໍຄວນເປັນເຈົ້າການຕື່ມ ເພື່ອໃຫ້ວຽກງານມີປະສິດ ທິພາບ ແລະ ມີການກວດກາການນຳໃຊ້ທຶນຮອນໃຫ້ຖືກຕ້ອງ ແລະເຮັດໃຫ້ວຽກທີ່ອອກມາມີຄຸນນະພາບ;
6. ການຮັບເອົາຊ່ຽວຊານ ແມ່ນເຫັນດີ, ທາງດ້ານວິຊາການແລະທຶນຮອນ ແຕ່ບັນຫາສຳຄັນ ທ້ອງການຕ້ອງນຳໃຊ້ໝົດຄວາມສາມາດຂອງເຂົາເຈົ້າ, ດັ່ງນັ້ນຕ້ອງມີແຜນການຄັກແນ່, ມອບວຽກໃຫ້ເຂົາເຈົ້າເຮັດ ແລະ ພ້ອມນັ້ນ ກໍມອບໃຫ້ພະນັກງານເຮັດວຽກນຳເຂົາເຈົ້າຄັກແນ່ ແລະ ຮູ້ຂົນຂວາຍໃຫ້ເຂົາເຈົ້າຮູ້ສະພາບການຂອງລາວ ໝາຍຄວາມວ່າຕ້ອງເປັນເຈົ້າການນຳໃຊ້ຊ່ຽວຊານ;
7. ພະນັກງານ ຕ້ອງມີຄວາມສາມາດເຮັດວຽກໄດ້; ບັນຫາພະນັກງານ ຄືລັດຖະກອນ, ຄວນ ເລືອກເຟັ້ນຕາມຄວາມສາມາດ, ຕາມວຽກ ແຕ່ໃຫ້ເປັນລະບົບດຽວກັນທັງຂອງໂຄງການ ແລະ ຫ້ອງການ ກປສ, ຍົກເວັ້ນການລາຍງານ ຈຶ່ງແຍກ, ອັນໃດລາຍງານໃຫ້ທະນາຄານໂລກ ກໍລາຍງານ; ຄຸ້ມຄອງພະນັກງານຫຼັກແບບລວມສູນ, ມອບວຽກໃຫ້ລະອຽດ (ແຕ່)ມີການແທນກັນໄດ້; ບັນຫາທີ່ສຳຄັນໃນວຽກພະນັກງານ ແມ່ນການສຶກສາອົບຮົມໃຫ້ເຂົາເຈົ້າອຸ່ນອ່ຽນ, ເຫັນອະນາຄົດຍາວນານ,

ນອກຈາກລະບົບເງິນເດືອນ; ສ້າງຄວາມສະໜິດສະໜົມ ນຳກັນແລະຄວາມເຂົ້າໃຈ, ມີຄວາມສາມັກຄີນຳກັນແລະຊ່ວຍເຫຼືອກັນ, ມີການຍ້ອງຍໍຜົນງານ, ມີການຈັດຕັ້ງອີງການມະຫາຊົນແລະໜ່ວຍພັກ;

8. ການປັບປຸງສະພາບໍລິຫານ ແລະ ຄະນະຊີ້ນຳໂຄງການ ກໍເລັ່ງເຮັດໃຫ້ແລ້ວ.

### 2.6.2. ກອງປະຊຸມຄະນະຊີ້ນຳ ຄສລ

ກອງປະຊຸມສາມັນ ຂອງຄະນະກຳມະການຊີ້ນຳ ຄສລ ໄດ້ຈັດຂຶ້ນດັ່ງນີ້: ຄັ້ງທີ V, ໃນວັນທີ 6/11/2007 ແລະ ຄັ້ງທີ VI ໃນວັນທີ 22/02/2008 ແລະ ຄັ້ງທີ VII ໃນເດືອນ 8/08. ກອງປະຊຸມເຫຼົ່ານີ້ ໄດ້ພິຈາລະນາຮັບຮອງເອົາບົດລາຍງານຄວາມຄືບໜ້າຫຼືບົດສະຫຼຸບການຈັດຕັ້ງປະຕິບັດ, ແຜນການໃນຂັ້ນຕໍ່ໄປ, ໂຄງການຍ່ອຍຂະໜາດໃຫຍ່, ຫຼື ນະໂຍບາຍຂອງ ຄສລ. ນອກນັ້ນ, ຄະນະປະຈຳ ກໍໄດ້ຈັດຕັ້ງກອງປະຊຸມຂຶ້ນ ຄັ້ງທີ 1 ເພື່ອພິຈາລະນາໃຫ້ການຊີ້ນຳແກ່ ຫ້ອງການ ກປສ ແລະ ໜ່ວຍງານຄຸ້ມຄອງ ຄສລ ໃນການຈັດຕັ້ງປະຕິບັດຜົນການທົບທວນ ຄສລ ໄລຍະກາງ ໃນເດືອນ 7/2008. ທັງໝົດນີ້ ໄດ້ເປັນການປະກອບສ່ວນອັນດີໃຫ້ແກ່ການຈັດຕັ້ງປະຕິບັດແຜນການ ຄສລ ໃຫ້ມີຄວາມຄືບໜ້າໄປຢ່າງດີ.

### 2.6.3. ການມາເຮັດວຽກ ຂອງທະນາຄານໂລກ

*2.6.3.1. ການມາເຮັດວຽກຂອງທະນາຄານໂລກ ຄັ້ງທີ 3*

ທະນາຄານໂລກ ໄດ້ມາຕິດຕາມການເຄື່ອນໄຫວຕົວຈິງໃນເດືອນ 3/08, ຊຶ່ງຈະໄດ້ເນັ້ນໃສ່ທົບທວນການຈັດຕັ້ງປະຕິບັດດ້ານເຕັກນິກ, ລະບົບການເງິນແລະການຈັດຈ້າງຈັດຊື້ ແລະ ການກະກຽມທົບທວນ ຄສລ ໄລຍະກາງ. ການຕີລາຄາຜົນງານລວມຍັງຢູ່ໃນລະດັບ "ພໍໃຈສົມຄວນ" ເຖິງແມ່ນຈຳນວນໂຄງການຍ່ອຍໄດ້ເພີ່ມຂຶ້ນ ຢ່າງຫຼວງຫຼາຍ ກໍດີ, ແຕ່ການຈ່າຍເງິນຕົວຈິງກໍຍັງຊັກຊ້າຫຼາຍ. ການຕິດຕາມດັ່ງກ່າວ ໄດ້ປັບປຸງວຽກງານຄຸ້ມຄອງແລະເຕັກນິກຂອງ ຄສລ ໃຫ້ມີຄວາມຄືບໜ້າໄປ.

*2.6.3.2. ການມາທົບທວນ ຄສລ ໄລຍະກາງຂອງທະນາຄານໂລກ*

ທະນາຄານໂລກ ກໍໄດ້ມາທົບທວນ ຄສລ ໄລຍະກາງ ແຕ່ ວັນທີ 16 ຫາ 27/06/08. ຜົນການທົບທວນອັນສຳຄັນອັນສຳຄັນ ແມ່ນວ່າຈຸດປະສົງຂອງ ຄສລ ຍັງຖືກຕ້ອງແລະໄດ້ຮັກສາໄວ້ຄືເກົ່າໂດຍລວມ, ແຕ່ຈະໄດ້ດັດແກ້ບາງຈຸດດັ່ງລຸ່ມນີ້:

*(i). ການດັດແກ້ ກອງທຶນຍ່ອຍ:*

ຍ້ອນສະພາບການດ້ານສິ່ງແວດລ້ອມປ່ຽນແປງໄວ, ເພື່ອສະໜັບສະໜູນວຽກກ່ຽວກັບການປ່ຽນແປງດິນຟ້າອາກາດ (ທີ່ບໍ່ມີໃນຍຸດທະສາດສິ່ງແວດລ້ອມ) ຕາມການສະເໜີ ຂອງ ອຂນສ, ຄສລ ຈະໄດ້ຕ້ອງດັດແກ້ ເນື້ອໃນຂອງກອງທຶນຍ່ອຍນະໂຍບາຍ ໃຫ້ກວມເອົາວຽກປ່ຽນແປງດິນຟ້າອາກາດ ແລະ ວຽກປະເມີນຜົນກະທົບດ້ານສິ່ງແວດລ້ອມເຂົ້ານຳວຽກຍົກຍ້າຍຈັດສັນປະຊາຊົນ ເປັນວຽກຄຸ້ມຄອງສິ່ງແວດລ້ອມ.

*(ii). ການຈັດຕັ້ງ*

1. ເພີ່ມຄວາມຮັບຜິດຊອບໃຫ້ຂະແໜງທີ່ກ່ຽວຂ້ອງກັບ ວຽກນະໂຍບາຍໄຟຟ້ານ້ຳຕົກ, ການຄຸ້ມຄອງສິ່ງແວດລ້ອມ ແລະ ການຄຸ້ມຄອງອ່າງນ້ຳແບບປະສົມປະສານ. ໃນນີ້, ທະນາຄານໂລກ

จะຊ່ວຍຮັບຜິດຊອບດ້ານເຕັກນິກ ແລະ ກປສ ຈະໄດ້ຮັບຜິດຊອບຕິດຕາມວຽກການເງິນແລະຈັດຈ້າງຈັດຊື້;

2. ຮັບເອົາທີ່ປຶກສາສາກົນ 2 ຕຳແໜ່ງໃໝ່ (ດ້ານການຄຸ້ມຄອງປ່າສະຫງວນແລະດ້ານການຄຸ້ມຄອງບໍລິຫານ);
3. ສ້າງໜຶ່ງຕຳແໜ່ງໃໝ່ຂຶ້ນ ຢູ່ໃນແຕ່ລະແຂວງ (ດ້ານການເງິນ) ເພື່ອຊ່ວຍຜູ້ອຳນວຍຄວາມສະດວກໃນການຕິດຕາມ ແລະ ກວດກາ ໂຄງການຍ່ອຍ (ແຂວງລະ 1 ຄົນ); ປັບປຸ່ງໜ້າວຽກຂອງຕຳແໜ່ງສຳຄັນ ຂອງ ໜຄຄ: ຫົວໜ້າໂຄງການ, ຫົວໜ້າກອງທຶນຍ່ອຍຊີວະນາໆພັນແລະນະໂຍບາຍ; ເພີ້ມບົດບາດຂອງຜູ້ອຳນວຍການແລະການເງິນ ໃນການເຄື່ອນໄຫວຂອງຄສລ. *(ລວມແລ້ວພະນັກງານ ຄສລ ຄາດວ່າຈະມີ 17 ຄົນ);*
4. ສຸມໃສ່ ອະນຸມັດໂຄງການຍ່ອຍຂະໜາດໃຫຍ່ ໃຫ້ແກ່ອົງການແລະຊຸມຊົນທີ່ມີຜົນງານດີ;
5. ຂະຫຍາຍການມີສ່ວນຮ່ວມຂອງອົງການຈັດຕັ້ງອື່ນໆ ໃຫ້ກວ້າງຂວາງ ເພື່ອປັບປຸງການຮ່ວມງານໃຫ້ດີຂຶ້ນ.

*(iii). ການຕໍ່ອາຍຸໂຄງການຕື່ມອອກໄປອີກ 1 ຫາ 2 ປີ:*

1. ຍ້ອນກຳນົດໝາຍທາງການ ໄດ້ແກ່ຍາວ, ທະນາຄານໂລກໄດ້ວາງແຜນໄວ້ວ່າອາດມີການຕໍ່ໂຄງການອອກອີກ 1 ຫາ 2 ປີ ຖ້າຫາກການຈັດຕັ້ງປະຕິບັດວຽກງານຂອງໂຄງການຍັງຊັກຊ້າ ແລະ ຍັງໄປໃນຈັງຫວະຂອງປັດຈຸບັນ.

*(iv). ຄວາມຍືນຍົງຂອງ ກປສ*

1. ສືບຕໍ່ ສຶກສາວ່າ ກປສ ຈະໄດ້ເງິນຈາກ ລາຍໄດ້ຈາກໂຄງການນໍ້າເທີນ 2 ແນວໃດ? ເພາະຜ່ານມາ ທະນາຄານໂລກ ຄິດວ່າລາຍໄດ້ຈາກໂຄງການນໍ້າເທີນ 2 ຈະແມ່ນ ກປສ ເປັນຜູ້ເອົາໄປຈັດຕັ້ງປະຕິບັດ, ແຕ່ໃນຕົວຈິງ ມັນຈະເອົາໄປເປັນງົບປະມານສິ່ງແວດລ້ອມຕາມລະບົບງົບປະມານ.

*(v). ການດັດແກ້ງົບປະມານ ກປສ*

ຈັດສັນ ງົບປະມານ ຈາກກອງທຶນຍ່ອຍຊີວະນາໆພັນ ມາເພີ້ມໃຫ້ກອງທຶນຍ່ອຍນະໂຍບາຍ 100.000 ໂດລາ ໃຫ້ວຽກຕິດຕາມກວດກາ ແລະ ອີກ 100.000 ໃຫ້ວຽກວຽກຄຸ້ມຄອງສິ່ງແວດລ້ອມ.

## 2.7 ຂ່າວສານ

### 2.7.1 ສູນຂ່າວສານ

ຫ້ອງການ ກປສ ໄດ້ສ້າງສູນຂ່າວສານມວນຊົນຂຶ້ນ ແລະ ໄດ້ເກັບກຳເອກະສານຕ່າງໆທີ່ ກປສ ສ້າງຂຶ້ນ ລວມທັງລະບຽບກົດໝາຍ, ບົດລາຍງານ ແລະ ແຜ່ນພັບ ເພື່ອສະໜອງໃຫ້ແກ່ມວນຊົນ ທີ່ມີຄວາມສົນໃຈນຳກອງທຶນ. ເອກະສານທີ່ໄດ້ຖືກຈັດພິມແລະແຈກໃຫ້ມວນຊົນ ອັນຕົ້ນຕໍ ແມ່ນມີ *ໃນຕາຕະລາງ 10*. ນອກນັ້ນ ກປສ ຍັງໄດ້ຜະລິດເອກະສານ ແລະ ໄດ້ແຈກໃຫ້ ແຕ່ຜູ້ທີ່ກ່ຽວຂ້ອງ ຫຼື ຜູ້ທີ່ມີຄວາມສົນໃຈທີ່ໄດ້ຂໍມາ ເປັນຕົ້ນບົດລາຍງານປະຈຳເດືອນ, ບົດແນະນຳ.

**ຕາຕະລາງ 10 - ເອກະສານຂອງ ກປສ ແຕ່ 2006-2008**

| ລ/ດ | ຊື່ເອກະສານ | ປະເພດ | ຈຳນວນ | |
|---|---|---|---|---|
| | | | ລາວ | ອັງກິດ |

| | | | | |
|---|---|---|---|---|
| 1. | ແຜ່ນພັບໂຄສະນາ ກປສ | ແຜ່ນພັບ | 2500 | 1000 |
| 2. | ແຜ່ນພັບໂຄສະນາ ຄສລ | ແຜ່ນພັບ | 1000 | 1000 |
| 3. | ແຜ່ນພັບໂຄສະນາ ກອງທຶນຍ່ອຍ ຊີວະນາໆພັນ | ແຜ່ນພັບ | 1000 | 1000 |
| 4. | ແຜ່ນພັບໂຄສະນາ ກອງທຶນຍ່ອຍ ນະໂຍບາຍ | ແຜ່ນພັບ | 1000 | 1000 |
| 5. | ແຜ່ນພັບໂຄສະນາ ກອງທຶນຍ່ອຍ ມົນລະພິດ | ແຜ່ນພັບ | 1500 | 1000 |
| 6. | ແຜ່ນພັບໂຄສະນາ ກອງທຶນຍ່ອຍ ຄຸ້ມຄອງທີ່ດິນ | ແຜ່ນພັບ | 1500 | 1000 |
| 7. | ແຜ່ນພັບໂຄສະນາ ກອງທຶນຍ່ອຍ ຄຸ້ມຄອງຊັບພະຍາກອນນ້ຳ | ແຜ່ນພັບ | 1500 | 1000 |
| 8. | ແຜນຍຸດທະສາດ 5 ປີ | ປື້ມ | 300 | 500 |
| 9. | ບົດສັງລວມໂຄງການ 2008 | ປື້ມ | 100 | 0 |
| 10. | ບົດລາຍງານ 2006 | ປື້ມ | 100 | 100 |
| 11. | ບົດລາຍງານ 2007 | ປື້ມ | 100 | 100 |

### 2.7.2 ການສ້າງເວບໄຊ

ກປສ ໄດ້ສ້າງແລະຈັດເວັບໄຊທາງການຂຶ້ນແລ້ວ ໂດຍໃສ່ຊື່: ນw.laoepf.org.la. ໃນປັດຈຸບັນ, ຫ້ອງການໄດ້ຈັດຂໍ້ມູນເຂົ້າແລະປັບປຸງເພື່ອໃຫ້ທັນການ ເປັນຕົ້ນ ກ່ຽວກັບການສະໜອງທຶນ, ການເຄື່ອນໄຫວທີ່ເດັ່ນຂອງ ກປສ/ຄສລ ເປັນຕົ້ນກອງປະຊຸມສະພາບໍລິຫານ, ຄະນະຊີ້ນຳ ຄສລ, ຂອງຫ້ອງການ ກປສ.

ແຕ່ເລີ້ມສ້າງເວັບໄຊມາ, ຈຳນວນຄົນທີ່ໄດ້ເຂົ້າເບິ່ງ ແມ່ນຫຼາຍສົມຄວນ ໂດຍສະເພາະ ຄົນລາວ ໄດ້ເຂົ້າເຖິງ 80%. ລາຍລະອຽດຂອງສະຖິຕິແມ່ນມີໃນ*ຕາຕະລາງ 11 ແລະ 12.*

**ຕາຕະລາງ** 11. ສະຖິຕິການເຂົ້າເບິ່ງເວບໄຊຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແຕ່ເດືອນ 11/2006 ເຖິງ 12/08/2008, ຈັດຕາມຜູ້ເຂົ້າເບິ່ງ

| ເດືອນ | ຈຳນວນທັງໝົດ | ຜູ້ໃໝ່ | ຜູ້ເກົ່າ |
|---|---|---|---|
| 8/2008 | 17 | 10 | 7 |
| 7/2008 | 82 | 55 | 27 |
| 6/2008 | 56 | 34 | 22 |
| 5/2008 | 104 | 72 | 32 |
| 4/2008 | 103 | 61 | 42 |
| 3/2008 | 79 | 59 | 20 |
| 2/2008 | 95 | 63 | 32 |
| 1/2008 | 70 | 53 | 17 |

| | | | |
|---|---|---|---|
| 12/2007 | 36 | 22 | 14 |
| 11/2007 | 67 | 41 | 26 |
| 10/2007 | 64 | 27 | 37 |
| 9/2007 | 63 | 27 | 36 |
| 8/2007 | 117 | 81 | 36 |
| 7/2007 | 121 | 72 | 49 |
| 6/2007 | 113 | 46 | 67 |
| 5/2007 | 45 | 12 | 33 |
| 4/2007 | 63 | 33 | 30 |
| 3/2007 | 60 | 27 | 33 |
| 2/2007 | 193 | 162 | 31 |
| 1/2007 | 29 | 14 | 15 |
| 12/2006 | 42 | 14 | 28 |
| 11/2006 | 41 | 20 | 21 |

**ຕາຕະລາງ 12.** ສະຖິຕິການເຂົ້າເບິ່ງເວບໄຊຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແຕ່ເດືອນ 11/2006 ເຖິງ 12/08/2008, ໄລ່ເປັນສ່ວນຮ້ອຍ ແລະ ຈັດຕາມປະເທດ

| ຊື່ປະເທດ | ສ່ວນຮ້ອຍ | ທຸງຊາດ |
|---|---|---|
| ສປປລາວ | 81.00% | |
| ໄທ | 5.00% | |
| ຟີລິບປິນ | 4.00% | |
| ຍີ່ປຸ່ນ | 4.00% | |
| ສະຫະລັດ | 3.00% | |
| ອິດສະຣາແອນ | 1.00% | |
| ໂຮລັງ | 1.00% | |
| ອື່ນໆ | 1.00% | |

## 2.7.3. ກອງປະຊຸມຜູ້ມີສ່ວນຮ່ວມ

ກອງປະຊຸມປະຈຳປີກັບຜູ້ມີສ່ວນຮ່ວມ ກໍໄດ້ຈັດຂຶ້ນໃນວັນທີ 22/2/08, ພາຍໃຕ້ການເປັນປະທານຂອງທ່ານສົມດີດວງດີ, ລັດຖະມົນຕີວ່າການກະຊວງການເງິນ, ຮອງປະທານສະພາບໍລິຫານຜູ້ປະຈຳການ ແລະມີ ທັງໝົດ 110 ຄົນໄດ້ເຂົ້າຮ່ວມ. ອັນນີ້ ໄດ້ປະກອບສ່ວນເຮັດໃຫ້ມີຫຼາຍພາກສ່ວນເຂົ້າໃຈ ແລະ ພົວພັນກັບ ກປສ ແລະ ຄສລ ຫຼາຍຂຶ້ນ ພ້ອມທັງໃຫ້ມີຄວາມເຂົ້າໃຈກ່ຽວກັບບັນຫາຕ່າງໆ ຂອງການພົວພັນແລະຮ່ວມມືນຳກັນ.

## *3. ລາຍຮັບ-ລາຍຈ່າຍ*

### *3.1. ລາຍຮັບ*

ແຕ່ຕົ້ນປີມາຮອດປັດຈຸບັນ, ລາຍຮັບຂອງ ກປສ ແມ່ນມາຈາກທຶນຊ່ວຍເຫຼືອລ້າຂອງທະນາຄານໂລກ ແລະ ລາຍຮັບຈາກຕົ້ນທຶນ ດັ່ງນີ້:

- ການເອົາຕົ້ນທຶນໄປຝາກທະນາຄານ ໄດ້ເຮັດໃຫ້ ກປສ ມີລາຍຮັບທັງໝົດໃນປີ 2008 ເກືອບ 170,000 ໂດລາ, ຫຼື 70% ຂອງແຜນການປີ. ອັນນີ້ ແມ່ນຍ້ອນ ວ່າອັດຕາດອກເບ້ຍທະນາຄານ ຕົກຕ່ຳ.
- ການຄ່ຽນເອົາເງິນຊ່ວຍເຫຼືອລ້າຈາກທະນາຄານໂລກ ມາໃຊ້ໃນ ຄສລ ໄດ້ເງິນປະມານ 820,900ໂດລາ ຫຼື ປະມານ 74.42% ຂອງແຜນປີ. ການທີ່ບໍ່ໄດ້ຕາມແຜນການນີ້ ແມ່ນຍ້ອນວ່າໂຄງການຍ່ອຍຍັງບໍ່ໄດ້ຮັບການປະຕິບັດແລະຈ່າຍເງິນຕາມແຜນການ.

*ລາຍລະອຽດມີໃນຕາຕະລາງ 13 ລຸ່ມນີ້.*

**ຕາຕະລາງ 13 - ສະພາບລາຍຮັບ ໃນປີ 2008**

| ແຫຼ່ງ | ແຜນ ປີ | ລາຍຮັບ | % |
|---|---|---|---|
| ດອກເບ້ຍຈາກການເອົາຕົ້ນທຶນໄປຝາກທະນາຄານ | 240,000 | 169,434 | 70.60 |
| ຄ່ຽນເອົາເງິນຊ່ວຍເຫຼືອລ້າຈາກທະນາຄານໂລກ | 1,102,993 | 820,900 | 74.42 |
| ລວມທັງໝົດ | 1,342,993 | 990,334 | 73.74 |

### *3.2. ລາຍຈ່າຍ*

ແຕ່ຕົ້ນປີມາຮອດປັດຈຸບັນ, ລາຍຈ່າຍ ແມ່ນຫຼາຍກວ່າ 792,882 ໂດລາ ລາຍລະອຽດມີດັ່ງນີ້:

- ຄ່າບໍລິຫານ ຈະຕົກຢູ່ທັງໝົດ *300,000* ໂດລາ ຫຼື *83%* ຂອງແຜນປີ, ການຈ່າຍຄ່າບໍລິຫານຫຼຸດ ກໍເພາະວ່າ ບໍ່ທັນໄດ້ເອົາຊ່ຽວຊານຕ່າງປະເທດເຂົ້າມາເທື່ອ, ພະນັກງານຈຳນວນໜຶ່ງລາອອກ ແລະ ການຄັດເລືອກແກ່ຍາວ ແລະ ວຽກປັບປຸງຫ້ອງການຍັງບໍ່ທັນໄດ້ເຮັດ;
